ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມການຄ້າພາຍໃນ

ເລກທີ 0281 /ກພນ.ປຊຊ

ນະຄອນຫຼວງວຽງຈັນ, ວັນທີ 11 MAR 2016

# ຄຳແນະນຳ

## ໃນການຈັດຕັ້ງປະຕິບັດຄຳສັ່ງ ຂອງລັດຖະມົນຕີວ່າການກະຊວງ ອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 2501/ອຄ.ຄພນ, ລົງວັນທີ 16 ທັນວາ 2015 ກ່ຽວກັບການຕິດສະຫຼາກສິນຄ້າ ເປັນພາສາລາວ

ເຖິງ: - ຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ

- ຫົວໜ້າຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ.

- ອີງຕາມ ກົດໝາຍວ່າດ້ວຍ ການປົກປ້ອງຜູ້ຊົມໃຊ້, ສະບັບເລກທີ 02/ສພຊ, ລົງວັນທີ 30 ມິຖຸນາ 2010;
- ອີງຕາມ ຄຳສັ່ງຂອງລັດຖະມົນຕີວ່າການກະຊວງ ອຸດສາຫະກຳ ແລະ ການຄ້າ ກ່ຽວກັບການຕິດສະຫຼາກສິນຄ້າເປັນພາສາລາວ, ສະບັບເລກທີ 2501/ອຄ.ຄພນ, ລົງວັນທີ 16 ທັນວາ 2015;
- ອີງຕາມ ຂໍ້ຕົກລົງວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກົມການຄ້າພາຍໃນ, ສະບັບເລກທີ 2250/ອຄ.ຈພງ, ລົງວັນທີ 20 ຕຸລາ 2012.

ເພື່ອເປັນການຜັນຂະຫຍາຍເນື້ອໃນຄຳສັ່ງ ກ່ຽວກັບການຕິດສະຫຼາກສິນຄ້າເປັນພາສາລາວ ຂອງລັດຖະມົນຕີວ່າການກະຊວງ ອຸດສາຫະກຳ ແລະ ການຄ້າ ທັງເປັນການຈັດຕັ້ງປະຕິບັດຄຳສັ່ງດັ່ງກ່າວ ຢ່າງເປັນເອກະພາບກັນໃນຂອບເຂດທົ່ວປະເທດ, ກົມການຄ້າພາຍໃນ ຈຶ່ງໄດ້ມີຄຳແນະ ເພື່ອໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ແລະ ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ນຳໄປຈັດຕັ້ງປະຕິບັດ ດັ່ງນີ້:

1. ໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ສົມທົບກັບຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ແຈ້ງໃຫ້ຂະແໜງການທີ່ກ່ຽວຂ້ອງ ແລະ ອຳນາດການປົກຄອງທ້ອງຖິ່ນຮັບຊາບ ທັງລົງເຜີຍແຜ່ແນະນຳໃຫ້ບັນດາຜູ້ຜະລິດພາຍໃນ, ຜູ້ນຳເຂົ້າ, ຜູ້ຂາຍຍົກ ແລະ ຕົວແທນຈຳໜ່າຍ ແມ່ນຕ້ອງໄດ້ຮັບຜິດຊອບໃນການຕິດສະຫຼາກສິນຄ້າເປັນພາສາລາວທັງໝົດ ກ່ອນການຈຳໜ່າຍສິນຄ້າໃຫ້ຜູ້ຂາຍຍ່ອຍ ແລະ ຜູ້ຊົມໃຊ້, ຍົກເວັ້ນແຕ່ສິນຄ້າທີ່

ໄດ້ຮັບຍົກເວັ້ນການຕິດສະຫຼາກ ຕາມທີ່ກຳນົດໃນ ຂໍ້ 4 ຂອງຄຳສັ່ງ 2501. ຮູບການເຜີຍແຜ່ແນະນຳ ແມ່ນຂຶ້ນກັບເງື່ອນໄຂຄວາມສະດວກຂອງພະແນກ ຢູ່ແຕ່ລະແຂວງ ຊຶ່ງສາມາດເຜີຍແຜ່ໃນຮູບແບບ: ເຊີນເປົ້າໝາຍທັງໝົດມາປະຊຸມ ເພື່ອເຜີຍແຜ່ແນະນຳ ຫຼື ເຜີຍແຜ່ຜ່ານສື່ມວນຊົນ, ເຮັດໜັງສືແຈ້ງການແຈກຢາຍໃຫ້ແຕ່ລະຫົວໜ່ວຍທຸລະກິດ ແລະ ຮູບແບບອື່ນໆ ຕາມຄວາມເໝາະສົມ. ແຕ່ສິ່ງສຳຄັນແມ່ນຕ້ອງເຜີຍແຜ່ໃຫ້ພາກສ່ວນທຸລະກິດ ກໍ່ຄືກຸ່ມເປົ້າໝາຍໃຫ້ຮັບຮູ້ຢ່າງທົ່ວເຖິງ.

2. ເນື້ອໃນຕົ້ນຕໍ ຂອງສະຫຼາກສິນຄ້າ ທີ່ຕ້ອງຕິດເປັນພາສາລາວນັ້ນ ແມ່ນໃຫ້ຖືກຕ້ອງຕາມທີ່ກຳນົດໃນມາດຕາ 19 ຂອງກົດໝາຍວ່າດ້ວຍການປົກປ້ອງຜູ້ຊົມໃຊ້ ສະບັບເລກທີ 02/ສພຊ, ລົງວັນທີ 30 ມິຖຸນາ 2010 ຊຶ່ງມີເນື້ອໃນຕົ້ນຕໍ ຢູ່ 4 ຂໍ້ ເປັນເນື້ອໃນສຳຄັນທີ່ຕ້ອງມີ, ແຕ່ເນື້ອໃນສະຫຼາກສິນຄ້າ ສາມາດມີຫຼາຍກວ່ານັ້ນໄດ້ ບົນພື້ນຖານຄວາມເປັນຈິງ ແລະ ຄຸນລັກສະນະຂອງສິນຄ້າ ແຕ່ບໍ່ໃຫ້ໂຄສະນາເກີນຂອບເຂດ ຫຼື ບໍ່ຖືກຕ້ອງກັບຄວາມເປັນຈິງ.

3. ວິທີການຕິດສະຫຼາກສິນຄ້າ ແມ່ນຕ້ອງຕິດໃຫ້ແໜ້ນ ເພື່ອບໍ່ໃຫ້ຕົກເຮ່ຍງ່າຍ (ໂດຍທົ່ວໄປແມ່ນຕິດມາຈາກໂຮງງານ) ຕິດຢູ່ບ່ອນເຫັນໄດ້ງ່າຍ ເພື່ອໃຫ້ຜູ້ຊົມໃຊ້ຊອກເຫັນໄດ້ງ່າຍ ແລະ ອ່ານໄດ້ສະດວກດີ. ຕ້ອງຕິດໃສ່ຕົວສິນຄ້າ, ພາສະນະບັນຈຸ, ຫີບຫໍ່ບັນຈຸສິນຄ້າ, ແກັດ ຫຼື ຖົງ ແລະ ສາມາດຕິດຊ້ອນກັບສະຫຼາກເດີມໄດ້ ໃນກໍລະນີທີ່ສິນຄ້ານັ້ນຫາກບໍ່ມີເນື້ອທີ່ພຽງພໍ ແລະ ສະຫຼາກສິນຄ້າທີ່ເປັນພາສາລາວ ແມ່ນລວມເອົາບັນດາເອກະສານ ຫຼື ຄູ່ມືຕ່າງໆທີ່ໃຊ້ປະກອບກັບສິນຄ້າຕົວນັ້ນໆ.

4. ສິນຄ້າທີ່ໄດ້ຮັບການຍົກເວັ້ນ ການຕິດສະຫຼາກສິນຄ້າເປັນພາສາລາວ ຕາມເນື້ອໃນ ຂໍ້ທີ 4 ຂອງຄຳສັ່ງແມ່ນໃຫ້ກວມເອົາສິນຄ້າທີ່ນຳມາວາງສະແດງ ໃນງານວາງສະແດງສິນຄ້າພ້ອມ.

5. ຜູ້ຜະລິດພາຍໃນ, ຜູ້ນຳເຂົ້າ, ຜູ້ຂາຍຍົກ,ຕົວແທນຈຳໜ່າຍ ແລະ ຂາຍຍ່ອຍສິນຄ້າ ທີ່ລະເມີດຄຳສັ່ງ 2501 ແມ່ນຈະຖືກກ່າວເຕືອນ ແລະ ເຮັດບົດບັນທຶກ, ປັບໃໝ, ໃຫ້ໂຈະ ຫຼື ຖອນໃບທະບຽນວິສາຫະກິດ ພ້ອມທັງຢຶດ ຫຼື ອາຍັດສິນຄ້າດັ່ງກ່າວ ໂດຍແຍກລະອຽດມາດຕະການຕໍ່ຜູ້ລະເມີດ ດັ່ງນີ້:

- ຜູ້ຜະລິດພາຍໃນ, ຜູ້ນຳເຂົ້າ, ຜູ້ຂາຍຍົກ ແລະ ຕົວແທນຈຳໜ່າຍ ຫາກມີການລະເມີດຄັ້ງທີ 1 ແມ່ນຈະຖືກກ່າວເຕືອນ ແລະ ເຮັດບົດບັນທຶກ ແຕ່ໃນບົດບັນທຶກຕ້ອງໄດ້ລະບຸໄລຍະເວລາອີກ 1 ເດືອນອອກໄປ ເພື່ອໃຫ້ຜູ້ລະເມີດໄດ້ຕິດສະຫຼາກສິນຄ້າເປັນພາສາລາວຄືນ ຖ້າຫາກວ່າໄລຍະເວລາ 1 ເດືອນຜ່ານໄປແລ້ວ ຜູ້ກ່ຽວຍັງບໍ່ຕິດສະຫຼາກສິນຄ້າເປັນພາສາລາວ ແມ່ນໃຫ້ຖືວ່າເປັນການລະເມີດຄັ້ງ ທີ 2, ຊຶ່ງຈະຖືກປັບໃໝແຕ່ **5.000.000 ກີບ - 7.000.000 ກີບ** ແລະ ຄັ້ງທີ 3 ແມ່ນຈະຖືກປັບໃໝແຕ່ **7.000.000 ກີບ - 9.000.000 ກີບ** ພ້ອມທັງໃຫ້ໂຈະການດຳເນີນກິດຈະການຊົ່ວຄາວ ແລ້ວໃຫ້ຕິດສະຫຼາກສິນຄ້າເປັນພາສາລາວຄືນ ພາຍຫຼັງຕິດສະຫຼາກສິນຄ້າສຳເລັດແລ້ວ ໃຫ້ສະເໜີຫາພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ສົມທົບກັບຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ລົງກວດກາຕົວຈິງ ຫຼື ຮ້າຍແຮງ ບໍ່ຍອມປະຕິບັດຄຳສັ່ງດັ່ງກ່າວ ແມ່ນ ໃຫ້ຖອນໃບທະບຽນວິສາຫະກິດ.

- ຜູ້ຂາຍຍ່ອຍສິນຄ້າ ຫາກມີການລະເມີດຄັ້ງທີ 1 ແມ່ນຈະຖືກກ່າວເຕືອນ ແລະ ເຮັດບົດບັນທຶກ ແຕ່ໃນບົດບັນທຶກຕ້ອງໄດ້ລະບຸໄລຍະເວລາອີກ 1 ເດືອນອອກໄປ ເພື່ອໃຫ້ຜູ້ລະເມີດໄດ້ຕິດສະຫຼາກສິນຄ້າເປັນພາສາລາວຄືນ ຖ້າເກີນກວ່າໄລຍະເວລາ 1 ເດືອນຜ່ານໄປແລ້ວ ຜູ້ກ່ຽວຍັງບໍ່ຕິດສະຫຼາກ ສິນຄ້າເປັນພາສາລາວ ແມ່ນໃຫ້ຖືວ່າເປັນການລະເມີດຄັ້ງ ທີ 2, ຊຶ່ງຈະຖືກປັບໃໝແຕ່ **500.000** ກີບ - **1.000.000** ກີບ ແລະ ຄັ້ງທີ 3 ແມ່ນຈະຖືກປັບໃໝແຕ່ **1.000.000** ກີບ - **2.000.000** ກີບ ພ້ອມທັງອາຍັດສິນຄ້າ ທີ່ບໍ່ໄດ້ຕິດສະຫຼາກສິນຄ້າເປັນພາສາລາວໄວ້ ພ້ອມທັງໃຫ້ຢຸດຕິການຂາຍສິນຄ້າເພື່ອໃຫ້ເຈົ້າຂອງຮ້ານຄ້າ ຕ້ອງໄດ້ຕິດສະຫຼາກສິນຄ້າເປັນພາສາລາວຄືນ ແລ້ວຈຶ່ງສາມາດຈຳໜ່າຍສິນຄ້າໄດ້.

ສ່ວນມາດຕະການປັບໃໝ ທີ່ໄດ້ກຳນົດໄວ້ໃນ ຂໍ້ຕົກລົງວ່າດ້ວຍອີງການຈັດຕັ້ງປະຕິບັດວຽກງານປົກປ້ອງຜູ້ຊົມໃຊ້ຂອງຂະແໜງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 1746/ອຄ, ລົງວັນທີ 23 ສິງຫາ 2012 ຂໍ້ 3 ມາດຕາ 12 ແລະ ຂໍ້ຕົກລົງຂອງ ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ ສະລັບເລກທີ 2552/ອຄ.ຄພນ, ລົງວັນທີ 14 ທັນວາ 2012 ວ່າດ້ວຍອີງການປະຕິບັດວຽກງານ ກວດກາການຄ້າ ຂໍ້ 1.9 ມາດຕາ 11 ແມ່ນໃຫ້ຍົກເລີກ.

6. ຄຳສັ່ງ 2501 ມີຜົນບັງຄັບໃຊ້ ຕໍ່ບັນດາຫົວໜ່ວຍທຸລະກິດ ໃນຂອບເຂດທົ່ວປະເທດ ພາຍຫຼັງ 15 ວັນ ນັບແຕ່ມື້ທີ່ໄດ້ແຈ້ງອອກໃນຈົດໝາຍເຫດທາງລັດຖະການ ໃນວັນທີ 24 ທັນວາ 2015, ດັ່ງນັ້ນ ສຳລັບຮ້ານຄ້າຂາຍຍ່ອຍ ແມ່ນໃຫ້ເລີ່ມຈັດຕັ້ງປະຕິບັດ ນັບແຕ່ວັນທີ 14 ເມສາ 2016 ເປັນຕົ້ນໄປ ແລະ ຜູ້ຜະລິດພາຍໃນ, ຜູ້ນຳເຂົ້າ ແລະ ຜູ້ດຳເນີນທຸລະກິດການຄ້າຂາຍຍົກ ຫຼື ຜູ້ເປັນຕົວແທນຈຳໜ່າຍສິນຄ້າໃດໜຶ່ງ ແມ່ນໃຫ້ເລີ່ມປະຕິບັດ ນັບແຕ່ວັນທີ 14 ມີນາ ເປັນຕົ້ນໄປ.

ດັ່ງນັ້ນ, ກົມການຄ້າພາຍໃນ ຈຶ່ງເຮັດຄຳແນະນຳ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດຄຳສັ່ງດັ່ງກ່າວ.

ຫົວໜ້າກົມການຄ້າພາຍໃນ

ກະຊວງອຸດສາຫະກຳ ແລະ ການຄ້າ — ກົມການຄ້າພາຍໃນ

ບຸນທຽນ ແກ້ວສີພາ